# ຂໍ້ເທັດຈິງສຳລັບຜູ້ຮັບ ແລະ ຜູ້ໃຫ້ການດູແລ
# ການອະນຸມັດນຳໃຊ້ສຸກເສີນ (EUA) ຂອງວັກຊີນໂຄວິດ-19 ໂມເດີນນາ (MODERNA)
# ໃນການປ້ອງກັນພະຍາດໂຄໂຣນາໄວຣັສ 2019 (ໂຄວິດ-19) ໃນບຸກຄົນທີ່ມີອາຍຸ 18 ປີ ຂຶ້ນໄປ

ທ່ານໄດ້ຖືກສະເໜີໃຫ້ນຳໃຊ້ວັກຊີນໂຄວິດ-19 ໂມເດີນນາ ໃນການປ້ອງກັນພະຍາດໂຄໂຣນາໄວຣັສ 2019 (ໂຄວິດ-19) ເກີດມາຈາກ SARS-CoV-2. ຂໍ້ມູນທີ່ລະບຸຢູ່ໃນຂໍ້ເທັດຈິງນີ້ຈະຊ່ວຍທ່ານໃຫ້ເຂົ້າໃຈເຖິງຄວາມສ່ຽງ ແລະ ປະໂຫຍດຂອງວັກຊີນໂຄວິດ-19 ໂມເດີນນາ, ຊຶ່ງທ່ານຈະໄດ້ຮັບເນື່ອງຈາກວ່າປັດຈຸບັນມີການລະບາດຂອງ ໂຄວິດ-19.

ວັກຊີນໂມເດີນນາ ໂຄວິດ-19 ແມ່ນວັກຊີນ ແລະ ຈະປ້ອງກັນຈາກ ໂຄວິດ-19. ບໍ່ມີອົງການອາຫານ ແລະ ຢາ ແຫ່ງໃດຂອງສະຫະລັດອາເມລິກາ (FDA) ອະນຸມັດໃຊ້ວັກຊີນນີ້ເພື່ອປ້ອງກັນໂຄວິດ-19.

ອ່ານຂໍ້ມູນຂໍ້ເທັດຈິງກ່ຽວກັບວັກຊີນໂຄວິດ-19 ໂມເດີນນາ. ຈົ່ງສົນທະນາກັບຜູ້ສະໜອງວັກຊີນ ຖ້າທ່ານມີ ຄຳຖາມ. ການຮັບວັກຊີນໂຄວິດ-19 ໂມເດີນນາແມ່ນທາງເລືອກຂອງທ່ານ.

ວັກຊີນ ໂຄວິດ-19 ໂມເດີນນາແມ່ນ ຕ້ອງສັກຊຸດໜຶ່ງ ເຊິ່ງມີ 2-ໂດສ໌, ແຕ່ລະໂດສ໌ຫ່າງກັນ 1 ເດືອນ, ສັກເຂົ້າໃນກ້າມຊີ້ນ.

ວັກຊີນໂມເດີນນາ ສຳລັບໂຄວິດ-19 ອາດຈະບໍ່ປ້ອງກັນສຳລັບທຸກຄົນ.

ຂໍ້ເທັດຈິງນີ້ອາດຈະຍັງບໍ່ທັນໄດ້ແຈ້ງການ. ສຳລັບຂໍ້ທັດຈິງໃນປັດຈຸບັນ, ກະລຸນາເຂົ້າເບິ່ງທີ່ www.modernatx.com/covid19vaccine-eua.

**ສິ່ງທີ່ທ່ານຄວນຮູ້ ກ່ອນທີ່ທ່ານຈະຮັບຢາວັກຊີນມີຫຍັງແດ່**

**ໂຄວິດ-19 ແມ່ນຫຍັງ?**
ໂຄວິດ-19 ແມ່ນເກີດຂຶ້ນຈາກໄວຣັສທີ່ມີຊື່ວ່າ SARS-CoV-2. ຊະນິດຂອງໂຄໂຣນາໄວຣັສ ໄດ້ຖືກຄົ້ນພົບ ກ່ອນໜ້ານີ້. ທ່ານສາມາດໄດ້ຮັບໂຄວິດ-19 ຜ່ານທາງການສຳຜັດກັບຄົນອື່ນທີ່ມີເຊື້ອໄວຣັສ. ມັນມີອິດທິພົນ ເຮັດໃຫ້ເປັນພະຍາດທາງເດີນຫາຍໃຈທີ່ສົ່ງຜົນກະທົບຕໍ່ອະໄວຍະວະອື່ນໆນຳດ້ວຍ. ຄົນທີ່ເປັນໂຄວິດ-19 ທີ່ໄດ້ຮັບການລາຍງານຈະມີອາການເຈັບປ່ວຍຫຼາຍຮູບແບບ. ອາການອາດຈະເກີດຂຶ້ນ 2 ຫາ 14 ວັນ ຫຼັງຈາກທີ່ໄດ້ຮັບໄວຣັສ. ອາການອາດລວມມີ: ເປັນໄຂ້ ຫຼື ໜາວສັ່ນ; ໄອ; ຫາຍໃຈຖີ່; ອ່ອນເພຍ; ເຈັບ ກ້າມຊີ້ນ ແລະ ຮ່າງກາຍ; ເຈັບຫົວ; ເສຍປະສາດສຳພັດຂອງລົດຊາດ ແລະ ກິ່ນ; ເຈັບຄໍ; ຕັນດັງ ຫຼື ຂີ້ມູກຍ້ອຍ; ວິນຫົວ ຫຼື ປວດຮາກ; ຖອກທ້ອງ.

**ວັກຊີນໂມເດີນນາໂຄວິດ-19 ແມ່ນຫຍັງ?**
ວັກຊີນໂມເດີນນາໂຄວິດ-19 ແມ່ນວັກຊີນທີ່ຍັງບໍ່ທັນໄດ້ຖືກອະນຸຍາດວ່າແມ່ນວັກຊີນປ້ອງກັນໂຄວິດ-19. ບໍ່ມີການອະນຸຍາດຈາກອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາ FDA-ວ່າເປັນວັກຊີນປ້ອງກັນໂຄວິດ-19.

ອົງການອາຫານ ແລະ ຢາ ສະຫະລັດອາເມລິກາ (FDA) ແມ່ນອະນຸມັດໃຫ້ໃຊ້ວັກຊີນໂມເດີນນາໂຄວິດ-19 ນີ້ ໃນກໍລະນີສຸກເສີນເພື່ອການປ້ອງກັນໂຄວິດ-19 ໃນບຸກຄົນທີ່ມີອາຍຸ 18 ປີ ຂຶ້ນໄປ ເຊິ່ງຢູ່ພາຍໃຕ້ການ ອະນຸມັດໃຫ້ນຳໃຊ້ສຸກເສີນ (EUA).

ສຳລັບຂໍ້ມູນເພີ່ມເຕີມໃນການອະນຸມັດການນຳໃຊ້ສຸກເສີນ (EUA), ເບິ່ງ"**ການອະນຸມັດການນຳໃຊ້ສຸກເສີນ (EUA) ແມ່ນຫຍັງ?**" ພາກສຸດທ້າຍຂອງຂໍ້ເທັດຈິງນີ້.

**ສິ່ງທີ່ທ່ານຄວນບອກກັບຜູ້ສະໜອງຢາວັກຊີນກ່ອນທີ່ທ່ານຈະຮັບວັກຊີນໂມເດີນນາໂຄວິດ-19 ແມ່ນຫຍັງ?**
ບອກໃຫ້ຜູ້ສະໜອງຢາວັກຊີນຮູ້ກ່ຽວກັບເງື່ອນໄຂການປິ່ນປົວຂອງທ່ານ, ລວມເຖິງຖ້າວ່າທ່ານ:

- ມີອາການແພ້

- ມີພະຍາດອັກເສບກ້າມຊີ້ນຫົວໃຈ (ການອັກເສບກ້າມຊີ້ນຫົວໃຈ) ຫຼື ເຫຍື່ອຫຸ້ມຫົວໃຈອັກເສບ (ການອັກເສບຂອງເສັ້ນນອກຫົວໃຈ)
- ເປັນໄຂ້
- ມີອາການເລືອດໄຫຼຜິດປົກກະຕິ ຫຼື ເປັນໂຣກເສັ້ນເລືອດຕີບ
- ພວກພູມຕ້ານທານບົກພ່ອງ ຫຼື ມີຢາທີ່ມີຜົນຕໍ່ລະບົບພູມຕ້ານທານຂອງທ່ານ
- ກຳລັງຖືພາ ຫຼື ວາງແຜນທີ່ຈະຖືກພາ
- ກຳລັງໃຫ້ນົມລູກ
- ຈະຕ້ອງໄດ້ຮັບວັກຊີນໂຄວິດ-19 ຊະນິດອື່ນ

**ຜູ້ໃດແດ່ທີ່ຄວນໄດ້ຮັບວັກຊີນໂຄວິດ-19 ໂມເດີນນາ?**

FDA ໄດ້ອະນຸຍາດໃຫ້ນຳໃຊ້ ວັກຊີນໂມເດີນນາໂຄວິດ-19 ສຸກເສີນ ສຳລັບບຸກຄົນທີ່ມີອາຍຸ 18 ປີ ຫຼື ຂຶ້ນໄປ.

**ຜູ້ໃດທີ່ບໍ່<u>ຄວນ</u> ຮັບຢາວັກຊີນໂມເດີນນາໂຄວິດ-19?**

ທ່ານບໍ່ຄວນຮັບຢາວັກຊີນໂຄວິດ-19ໂມເດີນນາຖ້າວ່າ:

- ມີອາການແພ້ຮຸນແຮງພາຍຫຼັງທີ່ໄດ້ສັກຢາວັກຊີນເຂັມທີ່ຜ່ານມາ
- ມີອາການແພ້ຮຸນແຮງໃນສ່ວນປະສົມຂອງວັກຊີນຊະນິດນີ້

**ສ່ວນປະສົມຂອງວັກຊີນໂຄວິດ-19ໂມເດີນນາແມ່ນຫຍັງ?**

ວັກຊີນໂຄວິດ-19ໂມເດີນນາ ມີສ່ວນປະສົມດັ່ງນີ້: ສານລິບບອນນູຄຣີອີກອາຊິດ (mRNA), ໄຂມັນ (SM-102, ພໍລີແອດເທີລີນໄກລຄໍ [PEG] 2000 ໄດມີລິດທອຍ ກລີເຊໂຣນ [DMG], ຄໍເຣສເຕໂຣນ, ແລະ 1,2-distearoyl-sn-glycero-3-phosphocholine [DSPC]), ໂທເມຕາມິນ, ໂທເມຕາມິນໄຮໂດຄໍລາຍ, ກົດອາຊີຕິກ, ໂຊດຽມອາຊີເຕດ ໄຫຼໄຮເດຣດ, ແລະຊູໂຄຣສ໌.

**ວັກຊີນໂຄວິດ-19 ໂມເດີນນາຈະເຂົ້າຮ່າງກາຍໄດ້ແນວໃດ?**

ທ່ານຈະໄດ້ຮັບການສັກຢາວັກຊີນໂມເດີນນາໂຄວິດ-19 ເຂົ້າສູ່ກ້າມຊີ້ນຂອງທ່ານ.

ວັກຊີນໂຄວິດ-19 ໂມເດີນນາແມ່ນຊຸດຢາວັກຊີນທີ່ມີ 2 ໂດສ໌ ຫ່າງກັນ 1 ເດືອນ.

ຖ້າທ່ານໄດ້ຮັບວັກຊີນໂຄວິດ-19 ໂມເດີນນາໜຶ່ງໂດສ໌, ທ່ານຈະໄດ້ຮັບໂດສ໌ທີສອງ ຂອງວັກຊີນຊະນິດ ດຽວກັນ ຫຼັງຈາກນັ້ນ 1 ເດືອນເປັນອັນສຳເລັດສຳລັບຊຸດຢາວັກຊີນ.

**ໄດ້ມີການນຳໃຊ້ວັກຊີນໂມເດີນນາໂຄວິດ-19 ແລ້ວບໍ່?**

ວັກຊີນໂມເດີນນາໂຄວິດ-19 ແມ່ນຍັງບໍ່ທັນຖືກຮັບຮອງ. ໃນການທົດລອງທາງການແພດ, ປະມານ 15,400 ຄົນທີ່ມີອາຍຸ 18 ປີຂຶ້ນໄປໄດ້ຮັບຢາວັກຊີນໂມເດີນນາໂຄວິດ-19 ຢ່າງໜ້ອຍ 1 ໂດສ໌.

**ວັກຊີນໂມເດີນນາໂຄວິດ-19 ມີຜົນປະໂຫຍດແນວໃດ?**

ໃນການທົດລອງທາງການແພດ, ວັກຊີນໂມເດີນນາໂຄວິດ-19 ໄດ້ສະແດງໃຫ້ເຫັນການປ້ອງກັນໂຄວິດ-19 ໂດຍມີການສັກ 2 ໂດສ໌ ຫ່າງກັນ 1 ເດືອນ. ໄລຍະຂອງການປ້ອງກັນໂຄວິດ-19 ປັດຈຸບັນຍັງບໍ່ທັນຮູ້ຈັກ.

**ວັກຊີນ ແຈນສັນໂຄວິດ-19 ມີຄວາມສ່ຽງຫຍັງແດ່?**

ມີໂອກາດໜ້ອຍຫຼາຍທີ່ວັກຊີນໂຄວິດ-19 ແຈນສັນສາມາດເຮັດໃຫ້ເກີດມີອາການແພ້ທີ່ຮຸນແຮງ. ການແພ້ທີ່ຮຸນແຮງ ມັກຈະເກີດຂຶ້ນພາຍໃນສອງ-ສາມນາທີ ຫາໜຶ່ງຊົ່ວໂມງພາຍຫຼັງທີ່ໄດ້ຮັບການສັກຢາວັກຊີນໂຄວິດ-19 ໂມເດີນນາ. ສຳລັບເຫດຜົນນີ້, ຜູ້ໃຫ້ບໍລິການສັກຢາແກ່ທ່ານຈະຖາມທ່ານເພື່ອໃຫ້ພັກຢູ່ໃນສະຖານທີ່ທີ່ທ່ານສັກຢາວັກຊີນເພື່ອທີ່ຈະຕິດຕາມທ່ານພາຍຫຼັງທີ່ຮັບການສັກ

ຢາວັກຊີນ. ອາການຂອງປະຕິກິລິຍາຮຸນແຮງລວມມີ:

- ຫາຍໃຈຍາກ
- ໜ້າ ແລະ ຄໍໃຄ່
- ຫົວໃຈເຕັ້ນໄວ
- ເປັນຜື່ນຂຶ້ນທົ່ວຮ່າງກາຍ
- ວິນຫົວ ແລະ ອ່ອນເພຍ

ກ້າມຊີ້ນຫົວໃຈອັກເສບ (ການອັກເສບຂອງກ້າມຊີ້ນຫົວໃຈ) ແລະ ເຫຍື່ອຫຸ້ມຫົວໃຈອັກເສບ (ການອັກເສບຂອງເສັ້ນນອກຫົວໃຈ) ໄດ້ເກີດຂຶ້ນກັບບາງຄົນຜູ້ທີ່ໄດ້ຮັບຢາວັກຊີນໂຄວິດ-19 ໂມເດີນນາ. ໃນຄົນສ່ວນໃຫຍ່, ອາການຈະເລີ່ມຂຶ້ນພາຍໃນສອງສາມມື້ ພາຍຫຼັງທີ່ໄດ້ຮັບຢາວັກຊີນໂຄວິດ-19 ໂມເດີນນ້າເຂັມທີສອງ. ໂອກາດໃນການເກີດຂຶ້ນແມ່ນຕ່ຳທີ່ສຸດ. ໄປພົບແພດທັນທີ ຖ້າທ່ານ ມີອາການໃດໜຶ່ງດັ່ງຕໍ່ໄປນີ້ ຫຼັງຈາກທີ່ໄດ້ຮັບວັກຊີນໂຄວິດ-19 ໂມເດີນນາ:

- ເຈັບໜ້າເອິກ
- ຫາຍໃຈຖີ່ແລະສັ້ນ
- ມີຄວາມຮູ້ສຶກວ່າຫົວໃຈເຕັ້ນໄວ, ຫົວໃຈສັ່ນ ຫຼື ຫົວໃຈເຕັ້ນແຮງຜິດປົກກະຕິ

ຜົນຂ້າງຄຽງທີ່ມີການລາຍງານຂອງວັກຊີນໂມເດີນນາໂຄວິດ-19 ລວມມີ:

- ປະຕິກິລິຍາຂອງບໍລິເວນທີ່ຖືກສັກຢາ: ປວດ, ເຈັບ ແລະ ການບວມຂອງແຂນເບື້ອງທີ່ມີການສັກຢາ, ບວມ (ແຂງ), ແລະ ເປັນສີແດງ
- ຜົນຂ້າງຄຽງທົ່ວໄປ: ອ່ອນເພຍ, ເຈັບຫົວ, ເຈັບກ້າມເນື້ອ, ປວດຕົນໂຕ, ໜາວສັ່ນ, ວິນຫົວ ແລະ ປວດຮາກ, ແລະ ເປັນໄຂ້

ຜົນຂ້າງຄຽງທີ່ໄດ້ມີການລາຍງານໃນລະຫວ່າງທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ຢາວັກຊີນໂຄວິດ-19 ໂມເດີນນາ ລວມມີ:

- ອາການແພ້ຢ່າງຮຸນແຮງ
- ກ້າມຊີ້ນຫົວໃຈຕາຍ (ການອັກເສບຂອງກ້າມຊີ້ນຫົວໃຈ)
- ເຫຍື່ອຫຸ້ມຫົວໃຈອັກເສບ (ການອັກເສບຂອງເສັ້ນນອກຫົວໃຈ)

ສິ່ງເຫຼົ່ານີ້ອາດຈະບໍ່ແມ່ນຜົນຂ້າງຄຽງທີ່ເປັນໄປໄດ້ທັງໝົດຈາກການສັກວັກຊີນໂຄວິດ-19 ໂມເດີນນາ. ຜົນຂ້າງຄຽງທີ່ຮຸນແຮງ ແລະ ຄາດບໍ່ເຖິງອາດຈະເກີດຂຶ້ນ. ວັກຊີນໂຄວິດ-19 ໂມເດີນນາແມ່ນຍັງຄົງໄດ້ຮັບການສຶກສາໃນການທົດລອງທາງການແພດ.

**ຂ້າພະເຈົ້າຄວນຈະເຮັດແນວໃດກ່ຽວກັບຜົນຂ້າງຄຽງ?**

ຖ້າທ່ານມີປະສົບການຂອງການແພ້ຢາທີ່ຮຸນແຮງ, ໂທຫາ 9-1-1, ຫຼື ໄປໂຮງໝໍທີ່ໃກ້ທີ່ສຸດ.

ໂທຫາຜູ້ທີ່ສັກຢາໃຫ້ແກ່ທ່ານ ຫຼື ຜູ້ສະໜອງການປິ່ນປົວຂອງທ່ານ ຖ້າທ່ານມີຜົນຂ້າງຄຽງທີ່ເກີດຂຶ້ນກັບທ່ານ ຫຼື ບໍ່ເຊົາ.

ລາຍງານຜົນຂ້າງຄຽງຫາ**ອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາ (FD)/CDC ລະບົບການ ລາຍງານເຫດການ ທີ່ບໍ່ດີຕໍ່ວັກຊີນ (VAERS)**. ເບີໂທລະສັບຟຣີຂອງ VAERS 1-800-822-7967 ຫຼື ລາຍງານຜ່ານທາງອອນລາຍ ຫາ https://vaers.hhs.gov/reportevent.html. ກະລຸນາລະບຸ "ວັກຊີນ ໂຄວິດ-19ໂມເດີນນາ EUA" ໃນແຖວທຳອິດຂອງ ເຄື່ອງໝາຍບ່ອກ #18 ຂອງແບບຟອມລາຍງານ.

ນອກຈາກນັ້ນ, ທ່ານສາມາດລາຍງານຜົນຂ້າງຄຽງຕໍ່ ບໍລິສັດ ໂມເດີນນາທີເອັກສ໌ (ModernaTX, Inc.) ທີ່ 1-866-MODERNA (1-866-663-3762).

ທ່ານຍັງອາດຈະໄດ້ຮັບທາງເລືອກໃນການລົງທະບຽນໃນ **ວີ-ເຊຟ໌** (v-safe). V-safe (**ວີ-ເຊຟ໌**) ແມ່ນ ເຄື່ອງມືສະໝັກໃຈທາງໂທລະສັບສະມາດໂຟນໃໝ່ ຊຶ່ງເປັນເຄື່ອງມືໃນການສົ່ງຂໍ້ຄວາມ ແລະ ການສຳຫຼວດ ທາງເວັບໄຊທ໌ ໃນການກວດຜູ້ ທີ່ໄດ້ຮັບການສັກຢາວັກຊີນ ເພື່ອລະບຸເຖິງທ່າແຮງໃນການເກີດຜົນກະທົບ ຂ້າງຄຽງຫຼັງຈາກທີ່ຮັບຢາໂຄວິດ-19. **ວີ-ເຊຟ໌** ຖາມຄຳຖາມທີ່ຈະຊ່ວຍ CDC ຕິດຕາມຄວາມປອດໄພຂອງ ວັກຊີນໂຄວິດ-19. **ວີ-ເຊຟ໌** ຍັງແຈ້ງເຕືອນໃຫ້ໄປຮັບຢາເຂັມທີສອງ ຖ້າຕ້ອງການ ແລະ ລາຍງານຕິດຕາມ ທາງໂທລະສັບຈາກ CDC ຖ້າຜູ້ເຂົ້າຮ່ວມລາຍງານຜົນກະທົບດ້ານສຸຂະພາບທີ່ສຳຄັນພາຍຫຼັງທີ່ສັກຢາໂຄວິດ-19. ສຳລັບຂໍ້ມູນເພີ່ມເຕີມ ວິທີການສະໝັກ, ເຂົ້າເບິ່ງ: www.cdc.gov/vsafe.

**ຈະເປັນແນວໃດຖ້າຂ້ອຍຕັດສິນໃຈທີ່ຈະບໍ່ສັກຢາວັກຊີນໂຄວິດ-19 ໂມເດີນນາ?**

ມັນເປັນທາງເລືອກຂອງທ່ານທີ່ຈະສັກ ຫຼື ບໍ່ສັກຢາວັກຊີນໂຄວິດ-19 ໂມເດີນນາ. ຖ້າທ່ານຕັດສິນໃຈທີ່ຈະ ບໍ່ຮັບມັນ, ມັນຈະບໍ່ມີຫຍັງປ່ຽນແປງໃນການປິ່ນປົວຂັ້ນພື້ນຖານຂອງທ່ານ.

**ມີທາງເລືອກອື່ນບໍ່ສຳລັບການປ້ອງກັນໂຄວິດ-19 ທີ່ໃກ້ຄຽງກັບວັກຊີນໂຄວິດ-19 ໂມເດີນນາ?**

ປັດຈຸບັນ, ອົງການອາຫານ ແລະ ຢາສາທະລັດອາເມລິກາ (FDA) ຍັງບໍ່ທັນອະນຸມັດວັກຊີນຫຼາກຫຼາຍ ຊະນິດສຳລັບການ ປ້ອງກັນໂຄວິດ-19. ວັກຊີນອື່ນໆທີ່ໃຊ້ໃນການປ້ອງກັນໂຄວິດ-19 ອາດຈະມີພາຍໃຕ້ ການອະນຸຍາດໃຫ້ນຳໃຊ້ສຸກເສີນ.

**ຂ້ອຍສາມາດຮັບວັກຊີນອື່ນໆໃນລະຫວ່າງທີ່ຂ້ອຍຮັບວັກຊີນໂຄວິດ-19 ໂມເດີນນາໄດ້ບໍ່?**

ຍັງບໍ່ມີຂໍ້ມູນການໃຊ້ວັກຊີນໂຄວິດ-19 ໂມເດີນນາ ຮ່ວມກັບວັກຊີນອື່ນ.

**ຖ້າຂ້ອຍຖືພາ ຫຼື ຢູ່ໃນໄລຍະການໃຫ້ນົມລູກຢູ່ຈະເປັນແນວໃດ?**

ຖ້າທ່ານຖືພາ ຫຼື ຢູ່ໃນໄລຍະການໃຫ້ນົມລູກ, ປຶກສາທາງເລືອກຂອງທ່ານກັບຜູ້ສະໜອງການດູແລສຸຂະ ພາບຂອງທ່ານ.

**ວັກຊີນໂຄວິດ-19 ໂມເດີນນາຈະເຮັດໃຫ້ຂ້ອຍເປັນໂຄວິດ-19 ບໍ່?**

ບໍ່. ວັກຊີນໂຄວິດ-19ໂມເດີນນາ ຈະບໍ່ມີ SARS-CoV-2 ແລະ ບໍ່ສາມາດເຮັດໃຫ້ທ່ານເປັນໂຄວິດ-19.

**ເກັບຮັກສາບັດສັກຢາຂອງທ່ານ**

ເມື່ອທ່ານໄດ້ຮັບຢາເຂັມທຳອິດ, ທ່ານຈະໄດ້ຮັບບັດສັກຢາວັກຊີນເພື່ອໃຫ້ຮູ້ວ່າມື້ໃດທີ່ທ່ານຈະໄປສັກຢາ ເຂັມທີສອງ ຂອງວັກຊີນໂຄວິດ-19 ໂມເດີນນາ. ຈື່ໄວ້ວ່າຕ້ອງເອົາບັດໄປນຳໃນເວລາໄປສັກຢາເຂັມທີສອງ.

**ຂໍ້ມູນເພີ່ມເຕີມ**

ຖ້າທ່ານມີຄຳຖາມ, ເຂົ້າເບິ່ງທີ່ເວັບໄຊທ໌ ຫຼື ໂທຫາເບີໂທລະສັບຜູ້ສະໜອງຂ້າງລຸ່ມນີ້.

ເຂົ້າເຖິງຂໍ້ເທັດຈິງທີ່ມີໃນປັດຈຸບັນ, ກະລຸນາສະແກນ ຄິວອາໂຄດ (QR code) ທີ່ລະບຸຂ້າງລຸ່ມນີ້.

| ເວັບໄຊທ໌ໂມເດີນນາວັກຊີນ ໂຄວິດ-19 | ເບີໂທລະສັບ |
| --- | --- |
| www.modernatx.com/covid19vaccine-eua | 1-866-ໂມເດີນນາ<br>(1-866-663-3762) |

**ຂ້ອຍສາມາດຮຽນຮູ້ເພີ່ມເຕີມໄດ້ແນວໃດ?**

- ຖາມຜູ້ສະໜອງການຮັບຢາວັກຊີນ.
- ເຂົ້າເບິ່ງ CDC ທີ່ https://www.cdc.gov/coronavirus/2019-ncov/index.html.
- ເຂົ້າເບິ່ງ ອົງການອາຫານ ແລະ ຢາສະຫະລັດອາເມລິກາ (FDA) ທີ່ https://www.fda.gov/emergency -preparedness- and-r esponse/mcm- legal-regulatory-and-policy-framework/emergency-use-authorization.
- ຕິດຕໍ່ຫາພະແນກສາທາລະນະສຸກທ້ອງຖິ່ນ ຫຼື ລັດຂອງທ່ານ.

**ຂໍ້ມູນການສັກຢາວັກຊີນຂອງຂ້ອຍຈະຖືກບັນທຶກຢູ່ໃສ?**

ຜູ້ສະໜອງການສັກຢາຂອງທ່ານອາດຈະລວມເຖິງຂໍ້ມູນການສັກຢາລະບົບຂໍ້ມູນຂ່າວສານກ່ຽວກັບການສັກຢາກັນພະຍາດ (IIS) ຫຼື ລະບົບທີ່ກຳນົດອື່ນໆໃນລັດ/ທ້ອງຖິ່ນຂອງທ່ານ. ນີ້ຈະໝັ້ນໃຈວ່າທ່ານຈະໄດ້ຮັບ ວັກຊີນຊະນິດດຽວກັນເມື່ອທ່ານກັບຄືນມາ ສັກຢາວັກຊີນເປັນເຂັມທີສອງ. ສຳລັບ ຂໍ້ມູນເພີ່ມເຕີມ ກ່ຽວກັບ IISs, ເຂົ້າເບິ່ງ: https://www.cdc.gov/vaccines/programs/iis/about.html.

**ຂ້ອຍຈະຖືກຮຽກເກັບເງິນຄ່າທຳນຽມການບໍລິການສຳລັບການຮັບຢາວັກຊີນໂຄວິດ-19 ບໍ?**

ບໍ່. ໃນຂະນະນີ້, ຜູ້ໃຫ້ບໍລິການສັກຢາບໍ່ສາມາດເກັບເງິນຄ່າບໍລິການສັກຢາຂອງທ່ານ ແລະ ທ່ານຈະບໍ່ໄດ້ເສຍເງິນຢາທີ່ບໍ່ຢູ່ໃນສະຕ໋ອກ ຫຼື ຄ່າທຳນຽມໃດໆທີ່ກ່ຽວຂ້ອງກັບການສັກຢາວັກຊີນໂຄວິດ-19. ເຖິງຢ່າງໃດກໍ່ຕາມ, ຜູ້ໃຫ້ບໍລິການສັກຢາວັກຊີນອາດຈະ ຮຽກເກັບເງິນຄືນຈາກໂຄງການ ຫຼື ແຜນທີ່ຄຸ້ມຄອງຄ່າທຳນຽມບໍລິການໂຄວິດ-19 ສຳລັບຜູ້ທີ່ໄດ້ຮັບວັກຊີນ (ປະກັນໄພສ່ວນຕົວ, ການປິ່ນປົວສຸຂະພາບ, Medicaid, ໂຄງການທີ່ບໍ່ແມ່ນປະກັນໄພໂຄວິດ-19 HRSA ສຳລັບຜູ້ໄດ້ຮັບທີ່ບໍ່ມີປະກັນໄພ).

**ຂ້ອຍສາມາດລາຍງານກໍລະນີທີ່ສົງໃສວ່າເປັນການສໍ້ໂກງໄດ້ຢູ່ໃສ?**

ບຸກຄົນທີ່ຮູ້ເຖິງການລະເມີດຂໍ້ກຳນົດຂອງໂຄງການວັກຊີນປ້ອງກັນໂຄວິດ-19 ຂອງ CDC ທີ່ອາດຈະເກີດຂຶ້ນຄວນລາຍງານຫາຫ້ອງການສຳນັກງານຜູ້ກວດກາທົ່ວໄປຂອງສະຫັດລັດອາເມລິກາ. ພະແນກສຸຂະພາບ ແລະ ການບໍລິການມະນຸດ, ທີ່ 1-800-HHS-TIPS ຫຼື TIPS.HHS.GOV.

**ໂຄງການຮ່ວມມືລະຫວ່າງປະເທດມີຫຍັງແດ່?**

ໂຄງການຮ່ວມມືລະຫວ່າງປະເທດມີຫຍັງແດ່ (CICP) ແມ່ນໂຄງການຂອງລັດຖະບານກາງທີ່ອາດຈະຊ່ວຍ ຈ່າຍຄ່າປິ່ນປົວສຸຂະພາບ ແລະ ລາຍຈ່າຍສະເພາະອື່ນໆຂອງຄົນທີ່ໄດ້ຮັບບາດເຈັບຮຸນແຮງ ຈາກຢາບາງ ຊະນິດ ຫຼື ຢາວັກຊີນ, ລວມທັງວັກຊີນນີ້. ໂດຍທົ່ວໄປແລ້ວ, ການຂໍຮັບເງິນຄືນຕ້ອງໄດ້ຍື່ນໄປຫາ CICP ພາຍໃນ (1) ປີຈາກມື້ທີ່ທ່ານໄດ້ຮັບວັກຊີນ. ຮຽນຮູ້ເພີ່ມເຕີມກ່ຽວກັບລະບົບນີ້, ເຂົ້າເບິ່ງ www.hrsa.gov/cicp/ ຫຼື ໂທ 1-855-266-2427.

**ການອະນຸຍາດນຳໃຊ້ສຸກເສີນ (EUA) ແມ່ນຫຍັງ?**

ອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາ (FDA) ໄດ້ເຮັດໃຫ້ວັກຊີນໂຄວິດ-19 ໂມເດີນນາ ສາມາດໃຊ້ໄດ້ພາຍໃຕ້ກົນໄກການເຂົ້າເຖິງສຸກເສີນທີ່ເອີ້ນວ່າ EUA. EUA ແມ່ນການສະໜັບສະໜູນຂອງ ເລຂາທິການສຸຂະພາບ ແລະ ການບໍລິການມະນຸດ (HHS) ໄດ້ຖະແຫລງວ່າ ສະຖານະການຂອງການ ລະບາດມີຢູ່ ແລະ ເພື່ອຢັ້ງຢືນການນຳໃຊ້ຢາ ແລະ ຜະລິດຕະພັນຊີວະພາບສຸກເສີນໃນໄລຍະການຄຸ້ມຄອງ ລະບາດຂອງໂຄວິດ-19.

ວັກຊີນໂຄວິດ-19 ໂມເດີນນາ ບໍ່ໄດ້ຜ່ານການກວດກາແບບດຽວກັນກັບຜະລິດຕະພັນທີ່ໄດ້ຮັບການອະນຸມັດ ຫຼື ລຶບລ້າງໂດຍ ອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາ (FDA). ອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາ (FDA) ອາດຈະອອກ EUA ເມື່ອໄດ້ຕາມເງື່ອນໄຂສະເພາະໃດໜຶ່ງ, ຊຶ່ງ ປະກອບດ້ວຍ ການບໍ່ມີທາງເລືອກທີ່ພຽງພໍ, ໄດ້ຮັບການ ອະນຸມັດ ແລະ ມີທາງເລືອກອື່ນ. ນອກຈາກ ນັ້ນ, ການຕັດສິນໃຈຂອງ ອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາ (FDA) ແມ່ນອີງໃສ່ຫຼັກຖານ ວິທະຍາສາດທັງໝົດທີ່ມີຢູ່ເຊິ່ງສະແດງໃຫ້ເຫັນວ່າຜະລິດຕະພັນດັ່ງກ່າວອາດຈະມີປະສິດທິຜົນ ໃນການປ້ອງ

ກັນ ໂຄວິດ-19 ໃນລະຫວ່າງການລະບາດຂອງໂຄວິດ-19 ແລະ ຜົນປະໂຫຍດທີ່ເປັນທີ່ຮູ້ຈັກ ແລະ ມີທ່າແຮງ ຂອງຜະລິດຕະພັນນອກເໜືອຈາກຄວາມສ່ຽງທີ່ເປັນທີ່ຮູ້ ແລະ ເປັນໄປໄດ້. ຂອງຜະລິດຕະພັນ. ທັງໝົດ ຂອງເກນມາດຕະຖານ ເຫຼົ່ານີ້ຕ້ອງໄດ້ຮັບການຕອບສະໜອງໃນການຂໍອະນຸຍາດນຳໃຊ້ຜະລິດຕະພັນໃນລະ ຫວ່າງການລະບາດຂອງໂຄວິດ-19.

EUA ສຳລັບວັກຊີນໂຄວິດ-19 ໂມເດີນນາ ແມ່ນມີຜົນບັງຄັບໃຊ້ສຳລັບໄລຍະເວລາຂອງໂຄວິດ-19 EUA ປະກາດໃຫ້ນຳໃຊ້ສຸກ ເສີນສຳລັບຜະລິດຕະພັນເຫຼົ່ານີ້, ຍົກເວັ້ນແຕ່ຖືກແຈ້ງໃຫ້ຢຸດເຊົາ ຫຼື ຖອນຄືນ (ຫຼັງຈາກ ນັ້ນຜະລິດຕະພັນອາດຈະບໍ່ຖືກໃຫ້ນຳໃຊ້ ອີກຕໍ່ໄປ).

Moderna US, Inc.
Cambridge, MA 02139

©2021 ModernaTX, Inc. ສະຫງວນສິດ.
ສິດທິບັດ: www.modernatx.com/patents
ປັບປຸງໃໝ່: 24 ມິຖຸນາ 2021

ສະແກນເພື່ອເກັບກຳຂໍ້ເທັດຈິ່ງທີ່ສະໜອງໃຫ້ຜູ້ຮັບວັກຊີນເພື່ອເກັບກຳການປິ່ນປົວທາງເອເລັກໂຕນິກ /ລະບົບຂໍ້ມູນກ່ຽວກັບພູມຕ້ານທານ.

ວັນທີບາໂຄດ: 04/2021